

# ໜ່ວຍງານຂະແໜງການຍ່ອຍນິເວດກະສິກຳ (SSWG-AE)


***ປອ.ທັດເທວາ ສະພັງທອງ***

*ຮອງຫົວໜ້າກົມຄຸ້ມຄອງ ແລະ ພັດທະນາ ທີ່ດິນກະສິກຳ*
*ກະຊວງກະສິກຳ ແລະ ປ່າໄມ້*


ຄພດກ DALaM

AFD AGENCE FRANÇAISE DE DÉVELOPPEMENT

# ພາກສະເໜີ

- ປະຫວັດຄວາມເປັນມາ
- ຈຸດປະສົງ
- ໜ້າທີ່ ແລະ ພາລະບົດບາດ
- ໂຄງຮ່າງການຈັດຕັ້ງ
- ກິດຈະກຳຂອງ SSWG-AE
- ການປັບປຸງ(ແກ້ໄຂ)



# ປະຫວັດຄວາມເປັນມາ

**ປະຊາກອນໃນທົ່ວໂລກ: ປະຊາກອນຂອງປະເທດໃນເຂດ**ອາຊີຕະເວັນອອກສຽງໃຕ້ ຄາດຄະເນວ່າຈະເພີ່ມຂຶ້ນ 2 ຕື້ຄົນ ພາຍໃນປີ 2030

**ຄວາມຕ້ອງການສະບຽງອາຫານ:** ການເພີ່ມຂຶ້ນຂອງປະຊາກອນໃນພາກພື້ນ, ອາຫານ ແລະ ໄຟເບີ ກໍ່ມີແນວໂນ້ມເພີ່ມຂຶ້ນເຊັ່ນດຽວກັນ

**ກະສິກໍາແບບອະນຸລັກ:** ສ້າງຜົນກະທົບທາງລົບຕໍ່ການຊຸດໂຊມ (ສິ່ງແວດລ້ອມ) ທີ່ດິນ, ດິນເຊາະເຈື່ອນ, ການຫຼຸດລົງຂອງຊີວະນາໆພັນ, ມົນລະພິດ, ການເຊື່ອມຂອງດິນ (desertification), ແລະ ອື່ນໆ)

**ການປ່ຽນແປງດິນຟ້າອາກາດ:** ບັນດາປະເທດໃນພາກພື້ນຈະປະເຊີນໜ້າກັບລະດັບນໍ້າທະເລທີ່ເພີ່ມຂຶ້ນ, ຄື້ນຄວາມຮ້ອນ, ໄພນ□າຖ້ວມ ແລະ ໄພແຫ້ງແລ້ງ, ແລະ ເຫດການດິນຟ້າອາກາດທີ່ນັບມື້ນັບຮ້າຍແຮງ ແລະ ບໍ່ສາມາດຄາດຄະເນໄດ້, ໃນນັ້ນການເຕີບໂຕດ້ານກະສິກໍາແມ່ນອີງໃສ່ແບບພື້ນບ້ານ"

**ຄວາມຕ້ອງການ:** ຜູ້ບໍລິໂພກ ແມ່ນຕ້ອງການ ອາຫານ ທີ່ ຄວາມສະອາດ, ເປັນມິດ ແລະ ປອດໄພ

# ຄວາມເປັນມາ

**ປະຊາກອນລາວ:** 78% ແມ່ນເຮັດອາຊີບໃນຂົງເຂດກະສິກຳ, ໂດຍມີລັກສະນະແບບກຸ້ມຕົນເອງ. ເຊິ່ງຜະລິດຕະພັນຕົ້ນຕໍ ແມ່ນ ເຂົ້າ, ກາເຟ, ຊາ, ສັດ ແລະ ພືດຜັກ.

**ຍຸດທະສາດ ແລະ ວິໄສທັດ ກະສິກຳ:** ຍຸດທະສາດການພັດທະນາກະສິກຳ 2025 ແລະ ວິໄສທັດປີ 2030 ແລະ ຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮອດປີ 2030 ແມ່ນ ເພື່ອສົ່ງເສີມຜະລິດຕະພັນພືດຜັກ. ໂດຍເນັ້ນໃສ່ທັນສະ ໄໝ, ສະອາດ, ປອດໄພ, ຄຸນນະພາບ, ໝັ້ນຄົງ, ຍືນຍົງ ແລະ ການຄ້າ.

**ກະສິກຳແບບອະນຸລັກ:** ແມ່ນໄດ້ຮັບການສົ່ງເສີມຈາກລັດຖະບານ ເພື່ອເປັນວິທີທາງທີ່ເປັນໄປໄດ້ ທີ່ຈະບັນລຸການຫັນປ່ຽນກະສິກຳ ໄປຄຽງຄູ່ກັບການຮັກສາສະພາບແວດລ້ອມທາງນິເວດກະສິກຳ ແລະ ການປັບປຸງຊີວິດການເປັນຢູ່ໃນເຂດຊົນນະບົດ.

**ກອງປະຊຸມ ລັດຖະມົນຕີກະສິກຳ ແລະ ປ່າໄມ້ ອາຊຽນ ຄັ້ງທີ 36:** ໃນກອງປະຊຸມລັດຖະມົນຕີກະສິກຳ ແລະ ປ່າໄມ້ ອາຊຽນ ຄັ້ງທີ 36 ໃນປີ 2012, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຂອງ ສປປ ລາວ ໄດ້ສະເໜີ ລິເລີ່ມ ດຳເນີນ ແລະ ປະສານງາ ເພື່ອສົ່ງເສີມກະສິກຳແບບອະນຸລັກ ໃນບັນດາສະມາຊິກປະເທດອາຊຽນ.

**ກອງປະຊຸມຄັ້ງທີ 1 ຂອງLICA: ໃນກອງປະຊຸມ, DALaM, ຕາງໜ້າໃຫ້ກະຊວງກະສິກຳ ແລະ ປ່າໄມ້, ໄດ້ເຫັນດີໃຫ້ລິເລີ່ມຈັດຕັ້ງປະຕິບັດ LICA ຄັ້ງທີ 1 ຂຶ້ນ ໃນປີ 2014.**

**Special 38th SOM AMAF: ໄດ້ຂະຫຍາຍ/ປັບ ຈາກກະສິກຳແບບອະນຸລັກ ເປັນນິເວດກະສິກຳ ເພື່ອເຜີຍແຜ່, ສົມທຽບ ແລະ ສ້າງຄວາມເປັນເອກະພາບ ຂອງບັນດາຂໍ້ບັງຄັບແຫ່ງຊາດ ດ້ານນິເວດກະສິກຳ ເພື່ອພັດທະນາຈຸດຢືນຂອງອາຊຽນ. LICA ໄດ້ຍົກລະດັບ ການອຳນວຍຄວາມສະດວກດ້ານນິເວດກະສິກຳ ສປປລາວ ໃນປີ 2017**

# ຄວາມເປັນມາ

## ພາກພື້ນ ແລະ ສາກົນ

**MAF ປະກອບສ່ວນ/ປະສານສົມທົບ ໃນລະບົບ ສະບຽງອາຫານແບບຍືນຍົງ**

ກະຊວງກະສິກຳ ແລະ ປ່າໄມ້ ຮ່ວມກັບ FAO ແລະ ລັດຖະບານຝຣັ່ງ, ໄດ້ນຳພາໜ່ວຍງານຂະແໜງການກະສິກຳ ແລະ ພັດທະນາຊົນນະບົດ. ພ້ອມດຽວກັນນີ້, ກປ ໄດ້ລົງນາມໃນ ຄະນະກຳມະການຄໍ້າປະກັນສະບຽງອາຫານ (CFS) ໃນປີ 2022 ເພື່ອສ້າງຄວາມເຂັ້ມແຂງ ການຄົ້ນຄວ້າ ແລະ ແຜນງານພັດທະນາ ໃນການສະໜັບສະໜູນການຫັນປ່ຽນນິເວດກະສິກຳ.

ກຳລັງຢູ່ໃນຂັ້ນຕອນການສະເໜີເປັນສະມາຊິກພັນທະມິດ ນິເວດກະສິກຳ

ແນວຄວາມຄິດລິເລີ່ມຂອງ ສປປ.ລາວ ກ່ຽວກັບກະສິກຳນິເວດ (LICA)

## ສປປ ລາວ

**ໜ່ວຍງານຂະແໜງການຍ່ອຍນິເວດກະສິກຳ (SSWG-AE)**

ເພື່ອສະໜັບສະໜູນໜ່ວຍງານຂະແໜງການກະສິກຳ ແລະ ພັດທະນາຊົນນະບົດ, ການຫັນປ່ຽນນິເວດກະສິກຳ ດຳເນີນພາຍໃຕ້ການເປັນສະມາຊິກ CFS, ແລະ ການເຂົ້າຮ່ວມພັນທະມິດສຳລັບການຫັນປ່ຽນລະບົບສະບຽງອາຫານ ຜ່ານຮູບແບບນິເວດກະສິກຳ ກໍ່ຄືຜົນໄດ້ຮັບຂອງ UNFSS, ພ້ອມທັງຍຸດທະສາດພັດທະນາກະສິກຳ 2025 ແລະ ວິໄສທັດປີ 2030 ແລະ ຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ 2030. ໜ່ວຍງານຂະແໜງການຍ່ອຍນິເວດກະສືາ ຈຶ່ງຈຳເປັນຕ້ອງໄດ້ຮັບການສ້າງຕັ້ງຂື້ນ.

# ໜ້າທີ່ ແລະ ພາລະບົດບາດ ຂອງ SSWG-AE

## 01 ຈັດສັນເວທີ ທີ່ມີປະສິດທິພາບ

ສໍາລັບການແລກປ່ຽນຄວາມຮູ້ ແລະ ການປຶກສາຫາລືດ້ານນະໂຍບາຍ ກ່ຽວກັບການຫັນປ່ຽນນິເວດກະສິກໍາ ລະຫວ່າງບັນດາພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ, ຄູ່ຮ່ວມພັດທະນາ ແລະ ຕົວແທນສາກົນ ໂດຍອີງໃສ່ບາງຈຸດສໍາຄັນ ທີ່ຕ້ອງໄດ້ປຶກສາຫາລື

## 02 ມີໜ້າທີ່ສະໜັບສະໜູນການພັດທະນາ

ແລວທາງແຫ່ງຊາດ ສໍາລັບການຄຸ້ມຄອງທີ່ດິນແບບຍືນຍົງ ແລະ ລະບົບສະບຽງອາຫານທີ່ພົ້ນເດັ່ນຈາກການເຈລະຈາລະດັບຊາດ ກ່ອນ UNFSS ແລະ ຄໍາໝັ້ນສັນຍາຂອງ ສປປ ລາວ ລະຫວ່າງ UNFSS ເດືອນກັນຍາ ປີ 2021

## 03 ນໍາເອົາຜູ້ຈັດຕັ້ງປະຕິບັດນິເວດກະສິກໍາທັງໝົດ

ແລະ ການເຊື່ອມສານເຂົ້າໃນແຜນງານຕົວຈິງ (ລວມຖືງການຈັດບູລິມະສິດຄວາມຕ້ອງການຂອງການຄົ້ນຄວ້າ), ແຜນການ, ການຈັດຕັ້ງປະຕິບັດ ແລະ ການລົງທຶນ ແລະ ການຕິດຕາມຄວາມຄືບໜ້າ

## 04 ພັດທະນາການຮ່ວມມືລະຫວ່າງຂະແໜງການ

ແລະ ກົນໄກການສະໜັບສະໜູນເວທີການຫັນປ່ຽນນິເວດກະສິກໍາ ໃນລະດັບຊາດ ແລະ ຂອບເຂດທົ່ວປະເທດ

## 05 ຮັບປະກັນຄວາມສອດຄ່ອງ ແລະ ການເຊື່ອມໂຍງ

ລະຫວ່າງຜົນໄດ້ຮັບຂອງການແລກປ່ຽນຄວາມຮູ້ ແລະ ການປຶກສາຫາລືດ້ານນະໂຍບາຍກ່ຽວກັບການຈັດຕັ້ງປະຕິບັດນິເວດກະສິກໍາ ກັບບັນດາ ນະໂຍບາຍນິເວດກະສິກໍາ, ຍຸດທະສາດ ແລະ ຂໍ້ບັງຄັບໃນຂັ້ນລະດັບຊາດ ທີ່ມີຢູ່

## 06 ການລວມເອົາບັນດາບົດຮຽນທີ່ຖອດຖອນໄດ້

ແລະ ທັດສະນະນະໂຍບາຍ ເພື່ອສົ່ງເສີມການພັດທະນາ ແລະ ການຂະຫຍາຍການສະໜັບສະໜູນນະໂຍບາຍ ແລະ ການຈັດຕັ້ງປະຕິບັດ

## 07 ການສົ່ງເສີມການຈັດຕັ້ງປະຕິບັດນິເວດກະສິກໍາ

ພາຍໃນ ສປປ.ລາວ, ລວມເຖິງ ການຈັດຕັ້ງບູລິມະສິດຮ່ວມ ແລະ ລະດົມແຫຼ່ງທຶນ, ການຄຸ້ມຄອງຕາມໝາກຜົນ ແລະ ການຕິດຕາມຄວາມຄືບໜ້າທີ່ບັນລຸໄດ້

## 08 ການກວດກາ ແລະ ຈັດຕັ້ງປະຕິບັດ

ຄໍາແນະນໍາກ່ຽວກັບການປຶກສາຫາລືດ້ານນະໂຍບາຍນິເວດກະສິກໍາ

## 09 ປັບປຸງຍຸດທະສາດນິເວດກະສິກໍາ ໃນ ສປປ.ລາວ

ແລະ ຊຸກຍູ້ການເຄື່ອນໄຫວສະໜັບສະໜູນ LICA ເຂົ້າສູ່ວາລະນະໂຍບາຍລວມ ແລະ ການຈັດຕັ້ງປະຕິບັດໃນລະດັບອາຊຽນ

## 10 ປະກອບສ່ວນໃນກອງປະຊຸມ SWG-ARD

ແລະ ປະສານສົມທົບກັບບັນດາໜ່ວຍງານຍ່ອຍອື່ນໆ ຕໍ່ບັນດາຫົວຂໍ້ລະຫວ່າງຂະແໜງການ ແລະ ແຫ່ງຊາດ

# ຈຸດປະສົງຂອງ SSWG-AE

## 01 ເພື່ອອຳນວຍຄວາມສະດວກ ແລະ ປະສານງານ

ເພື່ອອຳນວຍຄວາມສະດວກ ໃນການແລກປ່ຽນບົດຮຽນ ແລະ ປະສົບການ ກ່ຽວກັບນິເວດກະສິກຳ ລະຫວ່າງບັນດາກະຊວງ, ອົງການຜູ້ໃຫ້ທຶນ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ ແລະ ຊາວກະສິກອນ

## 02 ເພື່ອສ້າງ ແລະ ເຜີຍແຜ່

ວິໄສທັດຂອງລາວ ກ່ຽວກັບການຫັນປ່ຽນລະບົບສະບຽງອາຫານ ຜ່ານລະບົບນິເວດກະສິກຳ, ລວມທັງວິທີການສົ່ງເສີມການຄຸ້ມຄອງຈັດສັນທີ່ດິນແບບຍືນຍົງ.

## 03 ເພື່ອສົ່ງເສີມອົງປະກອບລວມຂອງບູລິມະສິດການຫັນປ່ຽນນິເວດກະສິກຳ

ເຊື່ອມສານເຂົ້າໃນແຜນງານ, ແຜນການ, ການຈັດຕັ້ງປະຕິບັດ, ການລົງທຶນ ແລະ ການຕິດຕາມການຈັດຕັ້ງປະຕິບັດຕົວຈິງຂອງຊາວກະສິກອນ

## 04 ເພື່ອຮັບປະກັນຄວາມສອດຄ່ອງ ຂອງ

ນະໂຍບາຍ, ແຜນງານ ແລະ ໂຄງການ ທີ່ຕິດພັນກັບການຫັນເປັນນິເວດກະສິກຳ ແລະ ຫຼັກການພື້ນຖານຂອງນິເວດກະສິກຳ;

## 05 ເພື່ອສ້າງພາລະບົດບາດຂອງ ສປປ ລາວ ໃນການສະໜັບສະໜູນ LICA ໃນລະດັບອາຊຽນ

ຜັນຂະຫຍາຍໄປສູ່ການສ້າງນະໂຍບາຍ ແລະ ຍຸດທະສາດລະດັບພາກພື້ນ ແລະ ສະໜັບສະໜູນກອງເລຂາ/ຜູ້ປະສານງານຂອງ LICA

# ອົງກອນ ແລະ ໂຄງຮ່າງການຈັດຕັ້ງ

## ໜ່ວຍງານຂະແໜງການຍ່ອຍນິເວດກະສິກຳ

AFD
AGENCE FRANÇAISE DE DÉVELOPPEMENT

ປະທານ ປະທານຮ່ວມ

### ໜ້າທີ່ຂອງປະທານ ແລະ ປະທານຮ່ວມ

- ❖ ຊີ້ນຳ ນຳພາ ແລະ ອຳນວຍຄວາມສະດວກ ໃນການປຶກສາຫາລື-ແລກປ່ຽນ ດ້ານນິເວດກະສິກຳ
- ❖ ສ້າງຈຸດມຸ່ງໝາຍ, ເປົ້າໝາຍ, ຂົງເຂດຈຸດສຸມ ແລະ ແຜນຈັດຕັ້ງປະຕິບັດ (ແຜນ 5 ປີ) ຂອງ “ໜ່ວຍງານຂະແໜງການຍ່ອຍນິເວດກະສິກຳ” ໂດຍການປຶກສາຫາລືກັບບັນດາສະມາຊິກ
- ❖ ກະກຽມບົດລາຍງານການຈັດຕັ້ງປະຕິບັດ ແລະ ຜົນໄດ້ຮັບຂອງ SSWG-AE ຕໍ່ໜ່ວຍງານຂະແໜງການກະສິກຳ ແລະ ພັດທະນາຊົນນະບົດ.
- ❖ ຈັດເວທີສົນທະນາ, ກອງປະຊຸມ ແລະ ສຳມະນາ ສຳລັບການແລກປ່ຽນດ້ານນິເວດກະສິກຳ ແລະ ການປຶກສາຫາລືດ້ານນະໂຍບາຍ ໃນລະດັບຊາດ ແລະ ພາກພື້ນ.
- ❖ ປັບປຸງຍຸດທະສາດ ຂອງ ສປປ.ລາວ ແລະ ຊຸກຍູ້ການແຜນການຈັດຕັ້ງປະຕິບັດ LICA ແລະ ຕິດຕາມການຈັດຕັ້ງປະຕິບັດທີ່ແຕກຕ່າງ ເພື່ອດຳເນີນການໃນລະດັບອາຊຽນ. ພັດທະນາສາຍພົວພັນການເຮັດວຽກພາຍໃນຜູ້ປະສານງານ LICA.
- ❖ ການລະດົມທຶນເພື່ອສະໜັບສະໜູນການປຶກສາຫາລືການຫັນປ່ຽນນິເວດກະສິກຳ.
- ❖ ການກວດກາ, ແນະນຳ ແລະ ຕິດຕາມ ຄວາມສອດຄ່ອງນະໂຍບາຍນິເວດກະສິກຳ ທີ່ມີຢູ່, ແລະ ຊຸກຍູ້ ເຂົ້າໃນຂະບວນການສ້າງນະໂຍບາຍ ທີ່ມີຜົນຕໍ່ການຫັນເປັນນິເວດກະສິກຳ

# ອົງກອນ ແລະ ໂຄງຮ່າງການຈັດຕັ້ງ (ຕໍ່)

## ທີມງານວິຊາການຈັດຕັ້ງປະຕິບັດ

### ກະຊວງກະສິກຳ ແລະ ປ່າໄມ້

1. ກົມແຜນການ ແລະ ການຮ່ວມມື, ກະຊວງ ກປ, ກອງເລຂາ SWG-ARD;
2. ກົມພັດທະນາຊົນນະບົດ, ກະຊວງ ກປ, ກອງເລຂາ SSWG-RD;
3. ກົມປ່າໄມ້, ກະຊວງ ກປ, ກອງເລຂາ SSWG-F & SSWG-AB;
4. ກົມປູກຝັງ, ກະຊວງ ກປ
5. ກົມລ້ຽງສັດ ແລະ ການປະມົງ, ກະຊວງ ກປ;
6. ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ກະຊວງ ກປ,
7. ສະຖາບັນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້, ກະຊວງ ກປ.

### ຄູ່ຮ່ວມພັດທະນາ

CIRAD, IRD, FAO, UNESCAP, EU, IFAD, CDE, ALiSEA, WOCAT, other relevant AE stakeholders

### NGOs and CSOs

AliSEA, SEADA, Lao Farmer Network, etc

### ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

1. ກົມທີ່ດິນ
2. ກົມສິ່ງແວດລ້ອມ

### ກະຊວງສາທາລະນະສຸກ

1. ກົມອາຫານ ແລະ ຢາ
2. ສູນໂພຊະນາການ

### ກະຊວງອຸດສະຫະກຳ ແລະ ການຄ້າ

1. ກົມສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ກາງ
2. ກົມອຸດສະຫະກຳ ແລະ ຫັດຖະກຳ
3. ສະພາການຄ້າແຫ່ງຊາດລາວ

### ມະຫາວິທະຍາໄລແຫ່ງຊາດ

1. ຄະນະກະເສດສາດ
2. ຄະນະວິທະຍາສາດສັງຄົມ
3. ຄະນະວິທະຍາສາດສິ່ງແວດລ້ອມ
4. ຄະນະເສດຖະສາດ
5. ຄະນະປ່າໄມ້

# ອົງກອນ ແລະ ໂຄງຮ່າງການຈັດຕັ້ງ (ຕໍ່)

## ກອງເລຂາ SSWG-AE

❖ ໜ້າທີ່

- ❖ ສະໜັບສະໜູນ ການຈັດຕັ້ງປະຕິບັດຂອງ SSWG-AE;
- ❖ ປະສານງານ ແລະ ຈັດການການດຳເນີນການ ໂດຍອີງໃສ່ການດຳເນີນກອງປະຊຸມຂອງ SWG-ARD ແລະ SSWG-AE, ທີ່ລວມມີ  ວາລະ ແລະ ການກະກຽມເນື້ອໃນກອງປະຊຸມ ໂດຍການປຶກສາຫາລືຮ່ວມກັບທີມງານວິຊາການຂອງ SSWG-AE ແລະ ຮັບປະກັນການເຂົ້າເຖິງບັນດາເອກະສານຕ່າງໆ (ຕົວຢ່າງ: ບົດບັນທຶກກອງປະຊຸມ);
- ❖ ອຳນວຍຄວາມສະດວກ ແລະ ປະສານງານ ຮ່ວມກັບສະມາຊິກ SSWG-AE ເພື່ອສະໜັບສະໜູນການປຶກສາຫາລື ການຫັນປ່ຽນນິເວດກະສິກຳ ແລະ ທຸກການສື່ສານ ແລະ ຮັບປະກັນການຕິດຕາມ,ຕາມສາຍຮ່ວມກັບ MPI-DIC ຕໍ່ກັບກອງປະຊຸມໂຕະມົນ (RTM) ແລະ ການຮັກສາສະມາຊິກຫຼັກຂອງ SSWG-AE ແລະ SWG-ARD ຄຽງຄູ່ກັບນະໂຍບາຍ, ແຜນການ ແລະ ກິດຈະກຳໂຄງການ ຢ່າງຕໍ່ເນື່ອງ;
- ❖ ກະກຽມໃຫ້ SSWG-AE ບັນຈຸໃນ RTM (ໂດຍຜ່ານການລະບຸເຂົ້າໃນ ບົດລາຍງານປະຈຳປີ SWG-ARD) ແລະ ຂັ້ນຕອນ ASEAN, ລວມເຖິງ LICA, ເຊິ່ງໄດ້ປຶກສາຫາລືຮ່ວມກັບບັນດາສະມາຊິກ.
- ❖ ຈັດເວທີສົນທະນາຮ່ວມກັບ SWG-ARD ແລະ ບັນດາຄູ່ຮ່ວມພັດທະນາ ແລະ ຜູ້ໃຫ້ທຶນ

| ກອງເລຂາ | ກົມ ຄພດກ-ກປ |
|---|---|
| ສະໜັບສະໜູນດ້ານວິຊາການ | CIRAD, IRD, FAO, UNESCAP |

# ກິດຈະກຳ

## ກອງປະຊຸມ

- ກອງປະຊຸມ SSWG-AE ໄດ້ກຳນົດໃຫ້ຈັດຂຶ້ນ ໃກ້ຄຽງກັບ ກອງປະຊຸມ SWG-ARD;
- ຈັດຂຶ້ນ 3 ຄັ້ງ ຕໍ່ປີ;
- ຈັດຂຶ້ນກ່ອນກອງປະຊຸມ SWG-ARD ແຕ່ລະຄັ້ງ.

## ການປັບປຸງແກ້ໄຂ

ການແກ້ໄຂ ແລະ ເພີ່ມເຕີມ ຕະຫຼອດເວລາ, ຕໍ່ກັບເງື່ອນໄຂການປະຕິບັດ ທີ່ຈະຕ້ອງໄດ້ຮັບການເຫັນດີ ແລະ ອະນຸມັດຈາກ ສະມາຊິກທີມງານວິຊາການ SSWG-AE

## ການລາຍງານ

- SSWG-AE ຈະກະກຽມບົດລາຍງານປະຈຳປີຂອງທີມ ໃຫ້ແກ່ SWG-ARD ໂດຍເນັ້ນໃສ່ຜົນໄດ້ຮັບຕົ້ນຕໍຂອງແຕ່ລະການປຶກສາຫາລື, ຄວາມຄືບໜ້າຂອງການເຊື່ອມໂຍງນະໂຍບາຍ AE ທີ່ມີຢູ່, ສິ່ງທ້າທາຍ ແລະ ຄວາມເປັນໄປໄດ້.

- ບົດລາຍງານ ແລະ ຜົນໄດ້ຮັບ ຈາກການສົນທະນາການທັນເປັນນິເວດກະສິກຳ ຈະໄດ້ເຜີຍແຜ່ຢູ່ SWG-ARD website.

# ໄດ້ຮັບການອະນຸມັດ ຈາກລັດຖະບານ

ແຈ້ງການຂອງກະຊວງແຜນການ ແລະ ການລົງທຶນ, ສະບັບເລກທີ 2759/ກຜທ, ກ່ຽວກັບການອະນຸມັດໃຫ້ AFD ເປັນປະທານຮ່ວມຂອງ SSWG-AE ແລະ SSWG-AE ກໍ່ໄດ້ຮັບການສ້າງຕັ້ງພາຍໃຕ້ SWG-ARD.



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ

ເລກທີ 2759 /ກຜທ
ນະຄອນຫຼວງວຽງຈັນ, ວັນທີ 19 ຕຸລາ 2023

**ແຈ້ງການ**

ຮຽນ: ທ່ານ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້, ທີ່ນັບຖື.

ເລື່ອງ: ອະນຸມັດຮັບເອົາ ອົງການຝຣັ່ງເພື່ອການພັດທະນາ (AFD) ປະຈຳ ສປປ ລາວ ເປັນປະທານຮ່ວມ ໃນຂະແໜງການຍ່ອຍວຽກງານນິເວດກະສິກຳ ພາຍໃຕ້ໜ່ວຍງານຂະແໜງກະສິກຳ ແລະ ພັດທະນາຊົນນະບົດ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ ສະບັບເລກທີ 357/ລບ, ລົງວັນທີ 09 ຕຸລາ 2019.
- ອີງຕາມ ໜັງສືສະເໜີຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 4058/ກປ, ລົງວັນທີ 22 ກັນຍາ 2023.

ກະຊວງແຜນການ ແລະ ການລົງທຶນ, ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເຫັນດີ ຮັບເອົາ ອົງການຝຣັ່ງເພື່ອການພັດທະນາ (AFD) ປະຈຳ ສປປ ລາວ ເປັນປະທານຮ່ວມໃນຂະແໜງການຍ່ອຍ ວຽກງານນິເວດກະສິກຳ (Sub-Sector Working Group on Agro-ecology 'SSWG-AE') ພາຍໃຕ້ໜ່ວຍງານຂະແໜງກະສິກຳ ແລະ ພັດທະນາຊົນນະບົດ (Sector working Group on Agriculture and Rural Development "SWG-ARD").

ມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການຊີ້ນຳການຈັດຕັ້ງປະຕິບັດວຽກງານດັ່ງກ່າວຮ່ວມກັບ ອົງການ AFD ແລະ ຄູ່ຮ່ວມພັດທະນາອື່ນທີ່ກ່ຽວຂ້ອງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ລັດຖະມົນຕີ

ປອ. ສະຖາບັນດິດ ອິນສີຊຽງໃໝ່



# ຂອບໃຈ

ກອງເລຂາ SSWG-AE Secretariate, DALaM, MAF, Lao PDR

dalam.maf.gov.la